ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ບົດບັນທຶກກອງປະຊຸມ ປຶກສາຫາລື ແລະ ລາຍງານຄວາມຄືບໜ້າ**
**ການເຮັດປຶ້ມ ເນື້ອໃນ 50 ປີ ສປປ ລາວ ແລະ ປຶ້ມບັນທຶກຮູບພາບ 50 ປີ**

ຄະນະຮັບຜິດຊອບເນື້ອໃນການເຮັດປຶ້ມ 50 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງ ສປປ ລາວ (ປຶ້ມເນື້ອໃນ) ແລະ ປຶ້ມບັນທຶກຮູບພາບ 50 ປີ ໃນມື້ພິທີສະເຫລີມສະຫລອງໃຫຍ່ ຈັດກອງປະຊຸມໃນຕອນເຊົ້າ ວັນທີ 16 ຕຸລາ 2025 ເວລາ 09:00 ໂມງ, ທີ່ຫ້ອງປະຊຸມຊັ້ນ 3 ສໍານັກຂ່າວສານປະເທດລາວ ເພື່ອປຶກສາຫາລື ແລະ ລາຍງານຄວາມຄືບໜ້າ ທາງດ້ານເນື້ອໃນ, ການກະກຽມຮູບພາບ ໂດຍການເປັນປະທານຂອງ ທ່ານ ວັນນະສິນ ສົມມະວົງ ຜູ້ອໍານວຍການໃຫຍ່ ສໍານັກຂ່າວສານປະເທດລາວ, ທັງເປັນຫົວໜ້າຄະນະຊີ້ນໍາ ແລະ ກວດແກ້ເນື້ອໃນ, ມີບັນດາຮອງຜູ້ອໍານວຍການໃຫຍ່ ແລະ ຄະນະຮັບຜິດດ້ານເນື້ອໃນ, ຜູ້ຈັດໜ້າປຶ້ມ ແລະ ຮູບພາບ ເຂົ້າຮ່ວມ.

ໃນກອງປະຊຸມຜູ້ຮັບຜິດຊອບເນື້ອໃນ ໄດ້ລາຍງານຄວາມຄືບໜ້າໃນການຂຽນເນື້ອໃນແຕ່ລະພາກ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການເກັບກໍາ, ການສັງຮວມຂໍ້ມູນປະກອບເຂົ້າໃນແຕ່ລະພາກ. ໃນນັ້ນ, ໄດ້ສໍາເລັດການຂຽນຄໍານໍາ.

ພາກສ່ວນເນື້ອໃນ:

ພາກທີ I. ມູນເຊື້ອການກໍາເນີດຊາດລາວ ຄົນລາວ ແມ່ນສໍາເລັດແລ້ວ ແລະ ກໍາລັງຈັດເຂົ້າໜ້າ.

ພາກທີ II. ລະບົບການເມືອງ-ການປົກຄອງ ຂອງ ສປປ ລາວ ແມ່ນໄດ້ສໍາເລັດໂດຍພື້ນຖານ ກໍາລັງຢູ່ໃນຂັ້ນຕອນການກວດແກ້.

ພາກທີ III. ຜົນສໍາເລັດການສ້າງສາພັດທະນາປະເທດຊາດ ແມ່ນໄດ້ສໍາເລັດແລ້ວຈໍານວນໜຶ່ງ(ຍັງຢູ່ໃນຂັ້ນຕອນກວດແກ້ເນື້ອໃນ ແລະ ຍັງລໍຖ້າຂໍ້ມູນຈໍານວນໜຶ່ງ ເປັນຕົ້ນແມ່ນ ເນື້ອໃນ 40 ປີ ແຫ່ງການປ່ຽນແປງໃໝ່ຮອບດ້ານ ມີຫລັກການຂອງພັກ.

ພາກທີ IV. ຍຸດທະສາດ ຂອງ ສປປ ລາວ ຮອດປີ 2030 ແມ່ນໄດ້ຂໍ້ມູນໂດຍພື້ນຖານ ປັດຈຸບັນພວມຈັດລຽງ ແລະ ຄັດຈ້ອນເນື້ອໃນ.

ສະຫລຸບລວມເຫັນໄດ້ວ່າເນື້ອໃນການເຮັດປຶ້ມ 50 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງ ສປປ ລາວ ແມ່ນສໍາເລັດໂດຍພື້ນຖານປະມານ 60%. ພ້ອມນີ້, ກອງປະຊຸມແມ່ນຕົກລົງປ່ຽນຫົວຂໍ້ໃນພາກທີ IV ເປັນຍຸດທະສາດ ຂອງ ສປປ ລາວ ຮອດປີ 2030 ໂດຍຍົກເອົາຫົວຂໍ້ການຮ່ວມມືສາກົນ ໄປໃສ່ໃນພາກທີ III.

ໃນຕອນທ້າຍຂອງກອງປະຊຸມ, ປະທານກອງປະຊຸມໄດ້ມີຄໍາເຫັນຊີ້ນໍາ ໂດຍມອບໃຫ້ ພາກສ່ວນທີ່ຮັບຜິດຊອບຈັດພິມປຶ້ມໃຫ້ເອົາເນື້ອໃນທີ່ສໍາເລັດບາງສ່ວນຈັດເຂົ້າໜ້າປຶ້ມໄວ້, ພາກໃດສໍາເລັດແລ້ວ ສະເໜີໃຫ້ຄະນະຮັບຜິດຊອບກວດແກ້ຕົວອັກສອນ ກວດແກ້ໄປແຕ່ລະພາກ.

ມອບໃຫ້ພະແນກຮູບພາບກະກຽມຮູບພາບ ທີ່ຈະປະກອບໃສ່ປຶ້ມ 50 ປີ ໂດຍສົມທົບກັບພາກສ່ວນເນື້ອໃນ, ພາກໃດທີ່ບໍ່ທັນມີ ໂດຍສະເພາະພາບການພັດທະນາໃນປັດຈຸບັນ ໃຫ້ຂຶ້ນແຜນໄປຖ່າຍພາຍຕົວຈິງມາປະກອບໃສ່; ໃຫ້ຮູບພາບຂຶ້ນແຜນປະກອບບຸກຄະລາກອນ ຮັບໃຊ້ພິທີສະເຫລີມສະຫລອງ ວັນຊາດ ຄົບຮອບ 50 ປີ ເພື່ອເກັບກໍາຮູບພາບໃສ່ໃນປຶ້ມຮູບພາບ 50 ປີ.

ຂໍ້ສະເໜີ:

- ສະເໜີການປະຊຸມຄັ້ງຕໍ່ໄປແມ່ນ ສະເໜີໃຫ້ມີຜູ້ທີ່ຮັບຜິດຊອບພາກສ່ວນອື່ນເຂົ້າຮ່ວມນຳ.
- ສະເໜີໃຫ້ຜູ້ຮັບຜິດຊອບດ້ານເນື້ອໃນແຕ່ລະພາກໃຫ້ສຳເລັດໃນທ້າຍເດືອນ ຕຸລານີ້.

ກອງປະຊຸມໄດ້ດຳເນີນເປັນເວລາເຄິ່ງວັນ ແລະ ໄດ້ສິ້ນສຸດລົງໃນເວລາ 12:00 ໂມງ ຂອງວັນດຽວກັນ ແລະ ໄດ້ມີການນັດປະຊຸມກັນໃນຄັ້ງຕໍ່ໄປໃນວັນທີ 30 ຕຸລາ 2025.

ດັ່ງນັ້ນ, ຈຶ່ງເຮັດບົດທຶກນີ້ໄວ້ເປັນຫລັກຖານໃນການປະຕິບັດໜ້າທີ່ວຽກງານ.

ນະຄອນຫລວງວຽງຈັນ, ວັນທີ 16 ຕຸລາ 2025

ປະທານກອງປະຊຸມ | ຜູ້ບັນທຶກກອງປະຊຸມ